ARKANSAS Division of
WORKFORCESERVICES

# ແຈ້ງການໃຫ້ພະນັກງານ-ລູກຈ້າງ
## ວິທີຍື່ນຄໍາຮຽກຮ້ອງຮັບເງິນປະກັນວ່າງງານ

ພະນັກງານ-ລູກຈ້າງຂອງ ______________________________
ມີການຄຸ້ມປະກັນຢູ່ພາຍໃຕ້ກົດໝາຍວ່າດ້ວຍພະແນກບໍລິການຄົນງານ.

ກົດໝາຍສະບັບນີ້ຈັດໃຫ້ມີເງິນປະກັນວ່າງງານ ໃຫ້ແກ່ຄົນທີ່ຖືກວ່າງງານ ແລະໃນບາງກໍລະນີໃຫ້ແກ່ຄົນທີ່ເຮັດການບໍ່ເຕັມເວລາ.

ໃນຖານະທີ່ທ່ານເປັນພະນັກງານ-ລູກຈ້າງທີ່ມີການຄຸ້ມປະກັນ, ນາຍຈ້າງຂອງທ່ານໄດ້ຝາກເບັ້ຍປະກັນເຂົ້າກອງທຶນທຣັສຕ໌ວ່າງງານແຫ່ງຣັຖອາຄັນຊໍ, ຫລືຖ້າຍັງບໍ່ທັນໄດ້ຝາກ ເພິ່ນກໍຈະຕ້ອງຊົດໃຊ້ກອງທຶນທີ່ຈ່າຍຜົນປະໂຫຍດເງິນວ່າງງານ. **<u>ນາຍຈ້າງຖືກສັ່ງຫ້າມບໍ່ໃຫ້ຫັກເງິນເບັ້ຍປະກັນວ່າງງານແນວໃດອອກຈາກຄ່າຈ້າງຂອງທ່ານ.</u>** ຈົ່ງແນ່ໃຈວ່ານາຍຈ້າງຮູ້ຈັກເລກປະກັນສັງຄົມ (ເລກບັດໂຊໂຊ) ຂອງທ່ານທີ່ຖືກຕ້ອງ.

A. ຖ້າເມື່ອທ່ານຮູ້ວ່າທ່ານຈະຖືກວ່າງງານໜຶ່ງອາທິດຫລືດົນກວ່ານັ້ນ, **<u>ທ່ານຈົ່ງເຮັດສິ່ງນີ້ດ່ວນ:</u>**

ຍື່ນຄໍາຮຽກຮ້ອງຮັບຜົນປະໂຫຍດຕໍ່ພະແນກບໍລິການຄົນງານ.

ພວກເຮົາຈະພະຍາຍາມຫາວຽກງານໃຫ້ທ່ານ ທັງໃນເວລາກ່ອນທີ່ທ່ານຈະເລີ່ມຮັບເງິນວ່າງງານ ແລະໃນເມື່ອທ່ານກໍາລັງໄດ້ຮັບແລ້ວ.

B. ຖ້າທ່ານເປັນພະນັກງານ-ລູກຈ້າງປະຈໍາຂອງນາຍຈ້າງ, ແລະເຮັດການບໍ່ເຕັມເວລາຍ້ອນເຫດຜົນນີ້ຢ່າງດຽວ ຄື ບໍ່ມີວຽກພຽງພໍເພື່ອເຮັດເຕັມເວລາ, ທ່ານອາດມີສິດຮັບເງິນວ່າງງານບາງສ່ວນ.

ໃນກໍລະນີເຊັ່ນນີ້, ທ່ານຈົ່ງຍື່ນຄໍາຮຽກຮ້ອງຮັບຜົນປະໂຫຍດບາງສ່ວນ **<u>--ດ່ວນ --</u>**ແລະແຈ້ງຂໍ້ມູນທີ່ກ່ຽວຂ້ອງ (ເຮັດບໍ່ເຕັມເວລາຈາກວັນທີໃດເຖິງວັນທີໃດ, ຄ່າຈ້າງ, ຊື່ນາຍຈ້າງ). **<u>ຈົ່ງຍື່ນເລື່ອງໂດຍບໍ່ຊັກຊ້າເດີ້.</u>**

ຫ້ອງການປະຈໍາທ້ອງຖິ່ນຂອງພວກເຮົາຍິນດີຕອບຄໍາຖາມແລະໃຫ້ລາຍລະອຽດຕື່ມ.

ທ່ານທີ່ເປັນຄົນຮຽກຮ້ອງສິດຮັບເງິນປະກັນວ່າງງານສາມາດຮັບບໍລິການໄດ້ຕາມຫ້ອງການປະຈໍາທ້ອງຖິ່ນທີ່ເປີດໃຫ້ບໍລິການເຕັມເວລາໃນເມືອງເຫລົ່ານີ້:

| | | |
|---|---|---|
| **Arkadelphia** | **Harrison** | **Mountain Home** |
| **Batesville** | **Helena** | **Newport** |
| **Benton** | **Hope** | **Paragould** |
| **Blytheville** | **Hot Springs** | **Pine Bluff** |
| **Camden** | **Jonesboro** | **Rogers** |
| **Conway** | **Little Rock** | **Russellville** |
| **El Dorado** | **Magnolia** | **Searcy** |
| **Fayetteville** | **Malvern** | **Texarkana** |
| **Forrest City** | **Mena** | **West Memphis** |
| **Fort Smith** | **Monticello** | |

**<u>ຄໍາເຕືອນ:</u>** ການໃຫ້ການບໍ່ຈິງເພື່ອຈະໄດ້ຮັບຜົນປະໂຫຍດ, ການປິດບັງຂໍ້ເທັດຈິງສໍາຄັນ, ຫລືການບໍ່ລາຍງານເຖິງລາຍໄດ້ເພື່ອຈະໄດ້ເງິນວ່າງງານຫລືເພື່ອຈະໄດ້ເງິນວ່າງງານຫລາຍຂຶ້ນ, ແມ່ນເປັນການລະເມີດຕໍ່ກົດໝາຍອາຍາແລະອາດຖືກດໍາເນີນຄະດີອາຍາໄດ້.

**** Servicios de Interpretación/Traducción disponibles por medio de su oficina local. --- Ewōr Jerbal in ukok ikijien jeje im kennaan ilo opij ko ijo kwoj pād ie. --- Các Dịch Vụ Thông Dịch/Phiên Dịch có sẵn qua văn phòng địa phương của quý vị. --- ຫ້ອງການປະຈໍາທ້ອງຖິ່ນຂອງທ່ານໃຫ້ບໍລິການນາຍພາສາແລະການແປເອກະສານ --- Interpretation/Translation services available through your local office.****